ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ເລກທີ 339 /ສສກ.ຄຊພຊ
ນະຄອນຫຼວງວຽງຈັນ, ວັນທີ 19 ມີນາ 2021

# ມະຕິ
# ກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ IX
# ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມສະໄໝສາມັນຄົບຄະນະ ຄັ້ງທີ IX ຂອງຄະນະກຳມາທິການແຫ່ງຊາດເພື່ອການ ພັດທະນາຊັບພະຍາກອນມະນຸດ (ຄຊພຊ) ໄດ້ໄຂຂຶ້ນໃນວັນພະຫັດ ວັນທີ 11 ມີນາ 2021, ທີ່ສູນຝຶກອົບຮົມສູນກາງແນວລາວສ້າງຊາດ, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານນາງ ແສງເດືອນ ຫຼ້າຈັນທະບູນ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ໂດຍມີບັນດາທ່ານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ຄະນະກຳມະການເພື່ອການພັດທະນາຊັບພະຍາກອນມະນຸດຂັ້ນສູນກາງ ແລະ ຂັ້ນແຂວງ/ນະຄອນຫຼວງ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ ລວມທັງໝົດ 121 ທ່ານ, ຍິງ 22 ທ່ານ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບ 4 ເນື້ອໃນຫຼັກຄື: (1) ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມະຕິ ຄຊພຊ ຄັ້ງທີ VIII ປະຈຳປີ 2020 ແລະ ແຜນການຈັດຕັ້ງປະຕິບັດ ປະຈຳປີ 2021, (2) ຜົນການທົດລອງການຄາດຄະເນຄວາມຕ້ອງການກຳລັງແຮງງານຂັ້ນແຂວງ, (3) ການສະຫຼຸບການຈັດຕັ້ງປະຕິບັດວຽກງານກິດຈະການນັກສຶກສາ ປີ 2016-2020 ແລະ ແຜນ ການ ປີ 2021-2025, (4) ຄວາມຄືບໜ້າຂອງການທົບທວນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ແລະ ຮ່າງແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດ 5 ປີ (2021-2025).

ຜ່ານການຮັບຟັງການລາຍງານ, ຄົ້ນຄວ້າ, ພິຈາລະນາ, ປະກອບຄຳເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນຂອງບັນດາທ່ານຜູ້ແທນກອງປະຊຸມຕໍ່ເນື້ອໃນຂ້າງເທິງນັ້ນ, ກອງປະຊຸມໄດ້ມີຄວາມເປັນເອກະພາບຮັບຮອງເອົາເປັນມະຕິກອງປະຊຸມ ດັ່ງນີ້:

1. ຮັບຮອງເອົາບົດລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມະຕິ ຄຊພຊ ຄັ້ງທີ VIII ປະຈຳປີ 2020 ແລະ ແຜນການຈັດຕັ້ງປະຕິບັດປະຈຳປີ 2021, ໂດຍມອບໃຫ້ກອງເລຂາຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ນຳໄປປັບປຸງຕາມຄຳເຫັນຂອງຜູ້ແທນກອງປະຊຸມ;

2. ມອບໃຫ້ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ນຳພາ-ຊີ້ນຳ ຄະນະກຳມະການພັດທະນາຊັບພະຍາກອນມະນຸດຂັ້ນກະຊວງ, ອົງການທຽບເທົ່າກະຊວງ ແລະ ຂັ້ນແຂວງ/ນະຄອນຫຼວງ ສືບຕໍ່ຜັນຂະຫຍາຍຍຸດທະສາດການພັດທະນາຊັບພະຍາກອນມະນຸດຮອດປີ 2025 ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳອັນລະອຽດ ເພື່ອການຈັດຕັ້ງປະຕິບັດໃນແຕ່ລະປີ ພ້ອມທັງຈັດສັນງົບປະມານສຳລັບແຕ່ລະກິດຈະກຳຢ່າງເໝາະສົມ ແລະ ສອດຄ່ອງກັບຄວາມເປັນຈິງ;
3. ມອບໃຫ້ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສືບຕໍ່ຄົ້ນຄວ້າງົບປະມານສຳລັບການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025 ສຳລັບໄລຍະ 2021-2025 ເພື່ອນຳສະເໜີຕໍ່ລັດຖະບານ ພິຈາລະນາອະນຸມັດ ໂດຍເອົາເຂົ້າໃນແຜນງົບປະມານປົກກະຕິຂອງຂະແໜງການ ແລະ ແຂວງ/ນະຄອນຫຼວງ;
4. ການພັດທະນາຊັບພະຍາກອນມະນຸດໃນຕໍ່ໜ້າ ໃຫ້ສຸມໃສ່ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວເປັນຕົ້ນ ການກໍ່ສ້າງຢ່າງມີຈຸດສຸມ, ໄດ້ຄຸນນະພາບ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ເອົາໃຈໃສ່ປັບປຸງຫຼັກສູດການສຶກສາຕາມຄວາມຕ້ອງການໃນການພັດທະນາປະເທດເຮົາໃນໄລຍະໃໝ່ໂດຍສອດຄ່ອງກັບທ່າອ່ຽງຂອງໂລກ ເພື່ອເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ; ພິເສດ, ຕ້ອງປະຕິບັດຕາມ ທິດຊີ້ນຳທີ່ວ່າ “ໃຫ້ຄົ້ນຄວ້າ, ປຶກສາຫາລື ແລະ ຊີ້ນຳ ກ່ຽວກັບການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນ, ສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ, ມີຄວາມສາມາດຄົ້ນຄ້ວາ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ເພື່ອຍົກສູງປະສິດທິພາບ ແລະ ສ້າງມູນຄ່າເພີ່ມໃນການຜະລິດ ແລະ ການບໍລິການ”;
5. ໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດສຳລັບປີ 2021, ມອບໃຫ້ກອງເລຂາຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສືບຕໍ່ແກ້ໄຂຂໍ້ຄົງຄ້າງຈາກການປະຕິບັດມະຕິກອງປະຊຸມ ຄຊພຊ ຄັ້ງທີ VIII ໃຫ້ສຳເລັດ ແລະ ເພີ່ມບາງໜ້າວຽກ ດັ່ງນີ້:
   - 5.1 ສືບຕໍ່ຄົ້ນຄ້ວາການທົບທວນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025, ແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ 5 ປີ ໄລຍະ 2016-2020 ແລະ ສ້າງແຜນປະຕິບັດງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ 5 ປີ ໄລຍະ 2021-2025 ໃຫ້ມີຈຸດສຸມສະເພາະ ແລະ ສອດຄ່ອງກັບແຜນພັດທະນາເສດທະກິດ-ສັງຄົມແຫ່ງຊາດ ເພື່ອນຳສະເໜີຕໍ່ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ພິຈາລະນາຮັບຮອງ ພາຍໃນ ປີ 2021;
   - 5.2 ປັບປຸງຄືນບັນດານິຕິກຳຕ່າງໆ ທີ່ຕິດພັນກັບວຽກງານພັດທະນາຊັບພະຍາກອນມະນຸດໃຫ້ສອດຄ່ອງກັບສະພາບປະຈຸບັນ ເພື່ອນຳສະເໜີຕໍ່ຄະນະປະທານ ຄຊພຊ ພິຈາລະນາ;
   - 5.3 ຄົ້ນຄ້ວາປັບປຸງກົນໄກ ແລະ ຈຸດປະສານງານໃນການຕິດຕາມ ແລະ ກຳນົດຮອບວຽນລາຍງານວຽກງານພັດທະນາຊັບພະຍາກອນມະນຸດ ໃຫ້ສອດຄ່ອງ ແລະ ສາມາດຈັດຕັ້ງປະຕິບັດ ໃຫ້ໄດ້ດີຂຶ້ນກວ່າເກົ່າ;
   - 5.4 ຄົ້ນຄ້ວາແຕ່ງຕັ້ງຄະນະວິຊາການໃນການສຶກສາ, ຄົ້ນຄ້ວາວິໄຈ ແລະ ວາງແຜນວຽກງານທີ່ຕິດພັນກັບການພັດທະນາຊັບພະຍາກອນມະນຸດ ເພື່ອດຳເນີນການຄົ້ນຄວ້າ ແລະ ການວາງແຜນພັດທະນາຊັບພະຍາກອນມະນຸດໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຄວາມຕ້ອງ ການຕົວຈິງຂອງຕະຫຼາດແຮງງານ;

5.5 ສືບຕໍ່ຮ່ວມເຮັດວຽກກັບຄະນະກຳມະການພັດທະນາຊັບພະຍາກອນມະນຸດຂັ້ນສູນກາງ ແລະ ຂັ້ນແຂວງ/ນະຄອນຫຼວງ ໃນການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາ ກອນມະນຸດແຫ່ງຊາດຮອດປີ 2025 ແລະ ຊຸກຍູ້ການສ້າງແຜນພັດທະນາຊັບພະຍາກອນມະນຸດຂອງຂະແໜງການທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃຫ້ສຳເລັດ;

5.6 ເອົາໃຈໃສ່ສືບຕໍ່ເຮັດວຽກກັບຄູ່ຮ່ວມພັດທະນາທັງພາຍໃນ ແລະ ຕ່າງປະເທດເພື່ອຂົນຂວາຍການສະໜັບສະໜູນດ້ານວິຊາການ ແລະ ງົບປະມານໃນການຄິດໄລ່ງົບປະມານການຈັດຕັ້ງປະຕິບັດຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ສ້າງລະບົບການຕິດຕາມ, ປະເມີນຜົນ ແລະ ການລາຍງານໃຫ້ຊັດເຈນ ແລະ ເປັນລະບົບຄົບຊຸດ;

5.7 ຄົ້ນຄວ້າ ແລະ ທົບທວນຄືນບັນດານະໂຍບາຍທຶນການສຶກສາຂອງລັດຖະບານ ແລະ ສືບຕໍ່ຍາດແຍ່ງທຶນການສຶກສາຈາກຕ່າງປະເທດ ພ້ອມທັງນຳໃຊ້ທຶນຊ່ວຍເຫຼືອຕ່າງໆ ໃຫ້ເກີດຜົນປະໂຫຍດສູງສຸດເພື່ອການກໍ່ສ້າງນັກວິຊາການ ແລະ ຊ່ຽວຊານໃນຂະແໜງການຕ່າງໆ;

5.8 ທົບທວນ ແລະ ປະເມີນຜົນການທົດລອງການນຳໃຊ້ແບບຈຳຮອງການພະຍາກອນຕະຫຼາດແຮງງານໃນຂັ້ນແຂວງ/ນະຄອນຫຼວງ ເພື່ອສືບຕໍ່ໃນການພັດທະນາບັນດາເຄື່ອງມືທີ່ຈຳເປັນ ໃຫ້ເປັນລະບົບຄົບຊຸດ;

6. ຄະນະກຳມະການພັດທະນາຊັບພະຍາກອນມະນຸດຂັ້ນກະຊວງ/ອົງການທຽບເທົ່າກະຊວງ ແລະ ຂັ້ນແຂວງ/ນະຄອນຫຼວງ ຈັດສັນງົບປະມານໃນການຈັດຕັ້ງປະຕິບັດວຽກງານພັດທະນາຊັບພະຍາກອນມະນຸດໃຫ້ກອງເລຂາຂອງຕົນຕາມຮອບວຽນປະຈຳປີ ຢ່າງໜ້ອຍໃຫ້ໄດ້ຈັດກອງປະຊຸມ 2 ຄັ້ງ ຕໍ່ປີ ເພື່ອຜັນຂະຫຍາຍມະຕິກອງປະຊຸມສະໄໝສາມັນຄົບຄະນະຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດປະຈຳປີ, ການຖອດຖອນບົດຮຽນການຈັດຕັ້ງປະຕິບັດ ແລະ ແຜນກິດຈະກຳສຳລັບວຽກງານພັດທະນາຊັບພະຍາກອນມະນຸດປະຈຳປີ;

7. ກອງປະຊຸມຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດຄັ້ງທີ X ຈະຈັດຂຶ້ນພາຍໃນເດືອນມັງກອນ 2022.

**ລັດຖະມົນຕີ**
**ປະທານຄະນະກຳມາທິການແຫ່ງຊາດ**
**ເພື່ອການພັດທະນາຊັບພະຍາກອນມະນຸດ**

ນ.ແສງເດືອນ ຫຼ້າຈັນທະບູນ